


# ອົງການຈັດຕັ້ງມະຫາຊົນ ຮາກຖານ ສາຂາ ທຫລ ພາກກາງ ລົງເຄື່ອນໄຫວເຜີຍແຜ່ພາລະບົດບາດຂອງ ທະນາຄານແຫ່ງ ສປປ ລາວ ໃຫ້ແກ່ ພະແນກອ້ອມຂ້າງແຂວງສະຫວັນນະເຂດ





ໃນຕອນເຊົ້າຂອງວັນທີ 13 ທັນວາ 2017 ເວລາ 08:00 ໂມງ, ທີ່ຫ້ອງການຂອງພະແນກແຜນການແລະການລົງທຶນແຂວງສະຫວັນນະເຂດ ທີ່ຜ່ານມາ, 3 ອົງການຈັດຕັ້ງມະຫາຊົນ ຮາກຖານ ສາຂາ ທຫລ ພາກກາງ ໄດ້ຈັດກອງປະຊຸມເຜີຍແຜ່ພາລະບົດບາດຂອງທະນາຄານແຫ່ງ ສປປ ລາວ ໃຫ້ແກ່ບັນດາສະມາຊິກອົງການຈັດຕັ້ງມະຫາຊົນຮາກຖານ ພະແນກແຜນການແລະການລົງທຶນແຂວງ ໂດຍມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 18 ສະຫາຍ ຍິງ 09 ສະຫາຍ.

ແລະ ໃນຕອນແລງເວລາ 13:00 ໂມງຂອງວັນດຽວກັນ, ທີ່ຫ້ອງປະຊຸມຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ ສະຫວັນນະເຂດ ກໍ່ໄດ້ຈັດກອງປະຊຸມເຜີຍແຜ່ພາລະບົດບາດຂອງທະນາຄານແຫ່ງ ສປປ ລາວ ໃຫ້ແກ່ບັນດາສະມາຊິກອົງການຈັດຕັ້ງມະຫາຊົນຮາກຖານ ພະແນກອຸດສາຫະກຳແລະການຄ້າແຂວງ ໂດຍມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 30 ສະຫາຍ ຍິງ 10 ສະຫາຍ.

ໃນການລົງເຄື່ອນໄຫວວຽກງານຄັ້ງນີ້, ຕາງໜ້າໃຫ້ແກ່ 3 ອົງການຈັດຕັ້ງມະຫາຊົນຮາກຖານ ສາຂາ ທະນາຄານແຫ່ງ ສປປ ລາວ ພາກກາງ ໂດຍແມ່ນ ສະຫາຍ ສຸລິສັກ ຣົ່ມໂພທິຈັກ ຮອງປະທານກຳມະບານຮາກຖານ ໄດ້ຂຶ້ນກ່າວຈຸດປະສົງກອງປະຊຸມຕົ້ນຕໍຂອງການມາເຄື່ອນໄຫວວຽກງານແມ່ນເພື່ອເຜີຍແຜ່ພາລະບົດບາດຂອງ ທຫລ ໃຫ້ສະມາຊິກ 3 ອົງການຈັດຕັ້ງມະຫາຊົນພາຍໃນພະແນກການອ້ອມຂ້າງແຂວງ ໃຫ້ຮັບຮູ້ ແລະ ເຂົ້າໃຈ ພ້ອມທັງເປັນການແລກປ່ຽນບົດຮຽນການຈັດຕັ້ງປະຕິບັດວຽກງານວິຊາສະເພາະຮ່ວມກັນທີ່ຕິດພັນກັບຂະແໜງການຄຸ້ມຄອງວຽກງານການເງິນ ແລະ ທັງເປັນການເຮັດໃຫ້ຂອດປະສານງານຂອງພະແນກການຕ່າງໆ ມີການປັບປຸງໃຫ້ດີຂຶ້ນ ເພື່ອຄຸ້ມຄອງຂະແໜງການເງິນໃຫ້ເປັນເອກະພາບໃນຕໍ່ໜ້າ.

ການເຜີຍແຜ່ຄັ້ງນີ້ ປະກອບມີ 04 ຫົວຂໍ້: 1.)ພາລະບົດບາດຂອງ ທຫລ/ ສາຂາ ທຫລ.ສຂ; 2.)ວຽກງານຄຸ້ມຄອງສະຖາບັນການເງິນ; 3.)ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ 4.)ວຽກງານທະນະບັດປອມ (ເງິນກົບ).





ຕະຫຼອດໄລຍະຂອງການດໍາເນີນວາລະກອງປະຊຸມເຜີຍແຜ່, ຜູ້ເຂົ້າຮ່ວມທຸກສະຫາຍ ໄດ້ມີຄວາມສົນໃຈຮັບຟັງເນື້ອໃນບັນດາຫົວຂໍ້ຂອງການນໍາສະເໜີ ກໍ່ຄືການເຜີຍແຜ່ດ້ວຍຄວາມເອົາໃຈໃສ່ຢ່າງຈິດຈໍ່ ເຊິ່ງສະແດງອອກ ໄດ້ມີຄໍາຖາມເຈາະຈີ້ມ ເພື່ອແລກປ່ຽນຄວາມຄິດເຫັນລະຫວ່າງຜູ້ບັນຍາຍ ແລະ ຜູ້ເຂົ້າຮ່ວມດ້ວຍບັນຍາກາດຟົດຟື້ນ.

ໃນຕອນທ້າຍຄະນະເຜີຍແຜ່ຍັງໄດ້ຝາກໃຫ້ສະມາຊິກທີ່ເຂົ້າຮ່ວມຮັບຟັງໃນຄັ້ງນີ້ ຊ່ວຍກັນນໍາເອົາຂໍ້ມູນທີ່ໄດ້ຮັບຮູ້ໄປເຜີຍແຜ່ໃຫ້ກັບຜູ້ທີ່ບໍ່ໄດ້ເຂົ້າຮ່ວມ ພ້ອມທັງເຜີຍແຜ່ໃຫ້ກັບປະຊາຊົນໃນເວລາທີ່ລົງເຄື່ອນໄຫວວຽກງານຢູ່ທ້ອງຖິ່ນ ເພື່ອເພີ່ມໃຫ້ທຸກຄົນມີສະຕິລະວັງຕົວ ພ້ອມທັງແຈ້ງໃຫ້ກັບພາກສ່ວນລັດທີ່ກ່ຽວຂ້ອງ ຕໍ່ບັນດາວິສາຫະກິດ ທີ່ເຄື່ອນໄຫວລະດົມທຶນ ທີ່ບໍ່ຖືກຕ້ອງ ເພື່ອສ້າງໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ສະຫງົບສຸກ.

**ພາບ-ຂ່າວ: ເດດອາລຸນ ແສນທະວົງ**